# ຂ່າວໃບລານ

ໂຄງການປົກປັກຮັກສາຫນັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ V ສະບັບທີ 11 * ກັນຍາ 1996
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION

## ຫໍພິພິທະພັນຫລວງພະບາງ ຄັງສາງແຫ່ງມໍລະດົກທາງພູມປັນຍາ



ຫໍພິພິທະພັນ ປະຫວັດສາດ ວັງເກົ່າຫລວງພະບາງ ຕິດພັນກັບເມືອງຫລວງພະບາງ ເຊິ່ງເປັນເມືອງເກົ່າແກ່ແຫ່ງຫນຶ່ງຂອງລາວ ເຄີຍເປັນເມືອງຫລວງຂອງອານາຈັກລາວລ້ານຊ້າງ ໃນກາງສັດຕະວັດ ທີ 14 ແຫ່ງຄິດຕະສັງກາດ.

ປັດຈຸບັນ ເມືອງຫລວງພະບາງ ຍັງມີສະຖານທີ່ ທາງປະຫວັດສາດ ແລະ ວັດທະນະທຳ ທີ່ມີຄຸນຄ່າຫລາຍແຫ່ງ ຕົ້ນຕໍກໍ່ແມ່ນ ຫໍພິພິທະພັນວັງເກົ່າຫລວງພະບາງ ຊຶ່ງເປັນບ່ອນສະສົມມໍລະດົກວັດທະນະທຳ ຂອງແຂວງຫລວງພະບາງໄວ້ຫລາຍຢ່າງ ໃນນັ້ນ ກໍມີຫນັງສືຜູກໃບລານ.

ວັງເກົ່າຫລວງພະບາງ ສ້າງຂຶ້ນໃນລະຫວ່າງປີ ຄ.ສ. 1904-1909 ສະໄຫມພະເຈົ້າມະຫາຊີວິດ ສີສະຫວ່າງວົງ ສືບທອດມາເຖິງພະເຈົ້າມະຫາຊີວິດ ສີສະຫວ່າງວັດທະນາ ກະສັດອົງສຸດທ້າຍ. ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ໃນປີ 1976 ວັງເກົ່າຫລັງນີ້ ໄດ້ປ່ຽນເປັນ ຫໍພິພິທະພັນປະຫວັດສາດ ໄຂຮັບໃຊ້ມວນຊົນທົ່ວໄປ ແລະກາຍເປັນສູນກາງຄົ້ນຄວ້າປະຫວັດສາດ ແລະ ວັດທະນະທຳແຫ່ງຫນຶ່ງທີ່ສຳຄັນຂອງຊາດ.

ເນື່ອງຈາກວ່າ ຫໍພິພິທະພັນແຫ່ງນີ້ ເປັນບ່ອນສະສົມຫນັງສືໃບລານ



*ຮູບນາງແຕງອ່ອນຕອນຖືກໃສ່ຮ້າຍວ່າ ໄດ້ລູກເປັນແຂ້ ຖືກຂັບຫນີຕີສິ່ງຈາກພະຍາມະຫາວົງ.*

ທີ່ເກົ່າແກ່ ແລະມີຄຸນຄ່າ ທີ່ໄດ້ຮິບໂຮມມາຈາກວັດທີ່ເປ່ເພແລ້ວ ໃນຊຸມປີ 1990 ນີ້ ເລີ່ມແຕ່ຕົ້ນເດືອນສິງຫາ ໂຄງການປົກປັກຮັກສາຫນັງສືໃບລານ ຈຶ່ງເລືອກເອົາ ຫໍພິພິທະພັນຫລວງພະບາງ ເປັນຈຸດສໍາຄັນໃນການສໍາຫລວດ.

ການສໍາຫລວດ ຄັ້ງນີ້ໃຊ້ເວລາ 3 ເດືອນກວ່າ ຈຶ່ງສໍາເລັດ ນັບວ່າເປັນການສໍາຫລວດທີ່ໃຊ້ເວລາດົນກວ່າບ່ອນອື່ນໆ ເນື່ອງຈາກວ່າ ເອກະສານໃບລານມີຫລາຍເຖິງ 6.809 ຜູກ ຮວມມີ 1.122 ເລື່ອງ ໃນນີ້ ເອກະສານທີ່ຈະຕ້ອງຖ່າຍໄມໂຄຼຟິມ ມີເຖິງ 6.491 ຜູກ ຖືວ່າເປັນຄັງສາງ ຫລືຫໍສະມຸດໃບລານ ທີ່ມີເອກະສານຫລາຍກວ່າຫມູ່ ໃນຈໍານວນຫລາຍໆແຫ່ງທີ່ໄດ້ສໍາຫລວດຜ່ານມາ ທ່ານມະຫາບຸນຍົກ ແສນສຸນທອນ ທີ່ປຶກສາປະຈໍາໂຄງການ ທັງເປັນຜູ້ຊີ້ນໍາຝ່າຍວິຊາການ ໄດ້ສະແດງທັດສະນະ ກ່ຽວກັບການສໍາຫລວດຄັ້ງນີ້ວ່າ: "ຫໍພິພິທະພັນຫລວງພະບາງນີ້ ເວົ້າໄດ້ວ່າເປັນຄັງສາງຂໍ້ມູນ ທາງວັດທະນະທໍາຂອງຊາດ ເພາະຫນັງສືໃບລານທີ່ເກັບມ້ຽນຢູ່ນີ້ ມີເນື້ອໃນຄົບ 18 ສາດ ".

ການທີ່ທ່ານມະຫາບຸນຍົກ ແສນສຸນທອນ ກ່າວມາຂ້າງເທິງນັ້ນ ຍ້ອນວ່າ ຜ່ານຈາກການສໍາຫລວດ ພົບເຫັນເອກະສານທີ່ເກົ່າແກ່, ມີຫລາຍຜູກຫລາຍມັດ ເປັນຫນັງສືທີ່ຫາຍາກບໍ່ຄ່ອຍພົບເຫັນ ສ່ວນຫລາຍຈະມີເນື້ອໃນກ່ຽວກັບຄໍາສອນທາງພຸດທະສາສະຫນາ ເປັນຄໍາພີພະໄຕປີດົກ ເຊັ່ນ: ໃນຫມວດພະວິໄນປີດົກ ປະກອບມີ ຄໍາພີອະພິທັມ, ຄໍາພີປາຈິຕຕີ (ອາຍຸ 347 ປີ), ມະຫາວັກ (ອາຍຸ 380 ປີ), ຈຸລະວັກ (ອາຍຸ 336 ປີ), ປະຣິວານ ( ອາຍຸ 476 ປີ ), ໃນຫມວດພະສູດ ປະກອບມີ ຄໍາພີໂຍຊະນາສາມັນຕະ (ອາຍຸ 312 ປີ), ວິສຸດທິມັກ (ອາຍຸ 304 ປີ), ທໍາມະບົດ (ອາຍຸ 329 ປີ), ມາຕິກັດຕັປປະກາສິນີ (ອາຍຸ 423 ປີ). ໃນຫມວດຊາດົກ ປະກອບມີ ຄໍາພີ ເອກະນິບາດ ( ອາຍຸ 358 ປີ ). ມະຫາວັງສະມາລິນີ ( ອາຍຸ 377 ປີ). ໃນຫມວດພະອະພິທັມ ມີຄົບທັງ 7 ຄໍາພີ ສ່ວນຫລາຍເປັນພາສາບາລີ, ລາວບາລີ ຂຽນດ້ວຍຕົວຫນັງສືທໍາລາວ. ນອກນັ້ນ ຍັງມີເອກະສານທີ່ກ່ຽວກັບ ຕໍາລາໂຫລາສາດ, ດາລາສາດຂອງລາວເຊັ່ນ : ຕໍານານດາວລຶກ 27 ດວງ ບັນທຶກໃສ່ພັບສາ ເຊິ່ງຖືໄດ້ວ່າເປັນກົກເຄົ້າຂອງການທວາຍການຫມູນວຽນຂອງຫນ່ວຍໂລກ. ພົບເຫັນເອກະສານທີ່ເວົ້າເຖິງຮີດຄອງຂອງຊູ້ນາງ ໃນພະລາຊະສໍານັກບູຮານ ໃນສະໄຫມການປົກຄອງແບບກະສັດ ທີ່ຖືໄດ້ວ່າບໍ່ເຄີຍພົບພໍ້ມາກ່ອນ ເຊັ່ນ: "ຕໍານານບົວຄໍາ", ມະຕິກັດຕັປປະກາສິນີ (ປະກອນ) ອາຍຸ 423 ປີ, ສັມປະໂຍຄະລັກຂະນະນະ ແລະ ບົດບັນທຶກເຫດການຕ່າງໆ ຂອງກະສັດລາວໃນສະໄຫມກ່ອນ ໃນນີ້ ຍັງໄດ້ພົບພັບສາ 20 ກວ່າເຫລັ້ມ ມີເຫລັ້ມຫນຶ່ງພິເສດກວ່າຫມູ່ ເນື້ອໃນເປັນວັນນະຄະດີເລື່ອງ "ນາງແຕງອ່ອນ" ປະກອບຮູບແຕ້ມຕາມແບບລວດລາຍລາວບູຮານ ທ່ານບຸນຍົກ ແສນສຸນທອນ ໄດ້ໃຫ້ຄໍາເຫັນວ່າ: "ຮູບແຕ້ມນີ້ ຄືລວດລາຍຂອງລາວຢ່າງແທ້ຈິງ ສະທ້ອນໃຫ້ເຫັນຄວາມເປັນລາວ ຢ່າງສົມບູນແບບ" ນອກນັ້ນ ເນື້ອໃນພັບສາຍັງປະກອບມີນິຍາຍທໍາມະທີ່ມີຄຸນຄ່າ ແລະ ຫາຍາກ ເຊັ່ນ: ເລື່ອງ " ກະປອມຄໍາ ", "ງົວຄໍາ" " ເຕົ່າຄໍາ ", " ກະຕ່າຍຄໍາ " ...

ຫນັງສືໃບລານ ແລະ ພັບສາ ທີ່ໂຄງການປົກປັກຮັກສາຫນັງສືໃບລານໄດ້ທໍາການປົກປັກຮັກສາ ສໍາເລັດແລ້ວນັ້ນ ມີຄຸນຄ່າທາງດ້ານວັດທະນະທໍາຢ່າງຫລວງຫລາຍ ມັນໄດ້ສະທ້ອນໃຫ້ເຫັນ ເຖິງຄວາມສາມາດອັນສູງສົ່ງຂອງບັນພະບູລຸດລາວ ທີ່ຝາກໄວ້ໃຫ້ຮຸ່ນລູກຫລານໄດ້ສືບສານ.

ຂໍໃຫ້ທຸກຄົນ ຈົ່ງຊ່ວຍກັນປົກປັກຮັກສາໃບລານ ແຜ່ນຄໍາແຫ່ງຍຸກສະໄຫມຂອງຊາດລາວ ຕໍ່ໄປເທີດ !

# ໂຄງການປົກປັກຮັກສາໜັງສືໃບລານລາວ ຈະເຮັດຫຍັງແດ່ ໃນປີ ໑໙໙໖-໙໗ ?

ໃນປີ 1996-97 ໂຄງການຈະໄດ້ສືບຕໍ່ສຳຫລວດ ບັນດາວັດທີ່ສຳຄັນຢູ່ນອກເທດສະບານ ຄື: ເມືອງຈອມເພັດ, ຊຽງເງິນ, ນ້ຳບາກ, ປາກອູ, ງອຍ, ປາກແຊງ, ໂພນໄຊ ແລະ ວຽງຄຳ ເຊິ່ງແຕ່ລະເມືອງຈະໄດ້ເລືອກເຟັ້ນສຳຫລວດວັດທີ່ ມີເອກະສານຫລາຍ, ເກົ່າແກ່ ແລະ ມີຄວາມສຳຄັນເປັນຫລັກ.

ຫລັງຈາກນັ້ນ ໜ່ວຍສຳຫລວດຈະໄດ້ແຍກເປັນ 2 ໜ່ວຍ ເພື່ອເຄື່ອນໄຫວຢູ່ ແຂວງອຸດົມໄຊ, ຜົ້ງສາລີ, ຫລວງນ້ຳທາ, ບໍ່ແກ້ວ, ເມືອງຊຽງຮ່ອນ ແລະ ເມືອງຄອບ ຂອງແຂວງໄຊຍະບູລີ.

ໃນດ້ານພຸດທະສາສະໜາ ກໍ່ຈະມີທຶນຊຸກຍູ້ການສຶກສາສົງ ໃຫ້ຄູ ອາຈານສອນພາສາປາລີ, ວັນນະຄະດີລາວ, ການຮຽນອ່ານ ແລະ ຈານໜັງສືທຳໃຫ້ແກ່ແຕ່ລະແຂວງ ທີ່ມີເງື່ອນໄຂ ໃນສົກປີ 1996-97 ນີ້ ຈະໄດ້ມອບທຶນຊຸກຍູ້ການສຶກສາສົງ ໃຫ້ແກ່ແຂວງບໍ່ແກ້ວ ແລະ ຫລວງນ້ຳທາ ເພື່ອນຳໃຊ້ເຂົ້າໃນການປັບປຸງການຮຽນ ແລະການສອນຂອງພະສົງ ທັງ 2 ແຂວງ.

ສຳຫລັບໜ່ວຍກາຍທຳໄມໂຄຼຟິມຈະໄດ້ສືບຕໍ່ເຄື່ອນໄຫວໃນເທດສະບານເມືອງຫລວງພະບາງ ຕະຫລອດປີ 1997 ຄຽງຄູ່ກັບນັ້ນ ທາງໂຄງການຍັງຈະໄດ້ຈັດພິມປຶ້ມວັນນະຄະດີ ແລະ ປຶ້ມອ່ານເສີມຄວາມຮູ້ ທາງວັດທະນະທຳ ທີ່ ລຶດຈະນາຈາກໃບລານ ເພື່ອເຜີຍແຜ່ໃຫ້ແກ່ສັງຄົມໄດ້ຊົມໃຊ້ຢ່າງກວ້າງຂວາງ.



*ນັກຮຽນມັດທະຍົມສົງ ແຂວງຫລວງພະບາງ*
*ພວມໃສ່ໃຈຮ່ຳຮຽນ ການຈານໃບລານ ຢ່າງເປັນຂະບວນຟົດຟື້ນ*

# ສັງລວມ ການ ເຄື່ອນໄຫວ

## ສະມາຊິກສະພາຜູ້ແທນລາສະດອນ ສ.ສ. ເຢຍຣະມັນ ພ້ອມຄະນະ ຢ້ຽມຢາມວັດນາກຸງ

ໃນວັນທີ 19 ເດືອນ ຕຸລາ 1996 ທ່ານ ບູຣເລີ ສະມາຊິກສະພາຜູ້ແທນ ລາສະດອນ ແຫ່ງ ສ.ສ. ເຢຍຣະມັນ, ພະນະທ່ານ ອຸລຣິສ ກູ໊ເຊັນ ເອກອັກຄະລັດຖະທູດ ສ.ສ.ເຢຍຣະມັນ ປະຈຳລາວ ພ້ອມດ້ວຍຄະນະ ໄດ້ລົງຢ້ຽມຢາມ ການປົກປັກຮັກສາໜັງສືໃບລານ ທີ່ວັດນາກຸງ ເມືອງປາກງື່ມ ກຳແພງນະຄອນວຽງຈັນ ໂດຍມີທ່ານ ໄວໂຍລິນ ພຣະສະຫວັດ ຮອງຫົວໜ້າຫ້ອງການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ນາງ ກົງເດືອນ ເນດຕະວົງ ຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ ພ້ອມດ້ວຍພະສົງສາມະເນນ ປະຊາຊົນບ້ານນາກຸງ ຄອຍໃຫ້ການຕ້ອນຮັບ.



ນັບວ່າເປັນຄັ້ງທຳອິດ ແລະ ເປັນການຢ້ຽມຢາມທີ່ສຳຄັນ ຂອງຜູ້ແທນຂັ້ນສູງແຫ່ງ ສ.ສ. ເຢຍຣະມັນ ທີ່ໄດ້ເຫັນຂະບວນການປົກປັກຮັກສາມໍລະດົກໃບລານ ຂອງປະຊາຊົນລາວ ໂດຍການອຸປະການຄ້ຳຊູ ຈາກລັດຖະບານ ສ.ສ. ເຢຍຣະມັນ. ໃນໂອກາດນີ້ ຄະນະຜູ້ແທນ ໄດ້ຊົມການຈານໃບລານ ປະເພນີອັນໜຶ່ງ ທີ່ຜູ້ໄດ້ບວດ ໄດ້ຮຽນ ຈະຕ້ອງໄດ້ເຝິກຝົນ ແລະ ຮ່ຳຮຽນ ຢ່າງເຄັ່ງຄັດ ຈຶ່ງເຮັດໃຫ້ພະສົງ ຫລືຜູ້ທີ່ເຄີຍບວດ ເຄີຍຮຽນຢູ່ວັດນີ້ ມາກ່ອນນັ້ນ ມີຄວາມຮູ້ຄວາມສາມາດ ດ້ານການອ່ານ, ການຂຽນໜັງສືໃບລານຢ່າງຊຳນິຊຳນານ ສິ່ງເຫລົ່ານີ້ແຫລະ ຄືຫົວໃຈຂອງປະຊາຊົນ ບ້ານນາກຸງ ທີ່ເຮັດໃຫ້ມໍລະດົກວັດທະນະທຳອັນເກົ່າແກ່ຍັງຄົງມີຊີວິດຊີວາ ແລະ ສືບທອດມາເຖິງທຸກມື້ນີ້.

ຈາກນັ້ນ ຄະນະຜູ້ແທນຍັງໄດ້ຟັງທຳນອງການອ່ານໜັງສືໃບລານ ຈາກທິດອຳຄາ ແລະ ຊົມເນື້ອໃນຕ່າງໆ ຂອງເອກະສານໃບລານ ທີ່ຖືກເກັບຮັກສາໄວ້ມາ ຫລາຍຊົ່ວຄົນ.

ກ່ອນທີ່ຈະອຳລາໄປ ທ່ານ ບູຣເລີ ຕາງໜ້າຄະນະຜູ້ແທນ ໄດ້ສະແດງຄວາມຮູ້ສຶກຕໍ່ການຢ້ຽມ ຢາມຄັ້ງນີ້ວ່າ: ເປັນຄັ້ງທຳອິດ ທີ່ໄດ້ມາເຫັນໜັງສືໃບລານ ທີ່ໄດ້ຮັບການກ່າວຂານກັນວ່າ ເປັນມໍລະດົກອັນມີຄຸນຄ່າ ແຕ່ຍັງມີຊີວິດຊີວາຂອງປະຊາຊົນລາວ. ເມື່ອມາເຫັນແລ້ວ ກໍ່ມີຄວາມປະທັບໃຈຫລາຍ ແລະ ດີໃຈທີ່ປະຊາຊົນເຢຍຣະມັນ ໄດ້ມີສ່ວນຮ່ວມໃນການອະນຸລັກມໍລະດົກອັນນີ້ ພາບທີ່ຂ້າພະເຈົ້າເຫັນໃນມື້ນີ້ ສະແດງໃຫ້ເຫັນວ່າ ການຊ່ວຍເຫລືອຂອງລັດຖະບານເຢຍຣະມັນ ໄດ້ມາຮອດມາເຖິງປະຊາຊົນລາວ ແລະ ເຮັດໃຫ້ການອະນຸລັກຮັກສາ ໜັງສືໃບລານ ໄດ້ຮັບຜົນເປັນຢ່າງດີ.

# ການປົກປັກຮັກສາໜັງສືໃບລານ ໃນສົກປີ ໑໙໙໕-໙໖

ໃນກາງເດືອນ ຕຸລາ 1996 ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ ຈັດພິທີສະຫລຸບວຽກງານການເຄື່ອນໄຫວ ປີ 1995-96 ຂຶ້ນ. ເຂົ້າຮ່ວມໃນພິທີມີ ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ທ່ານ ສາສະດາຈານ ດຣ. ຮາຣັນ ຮຸນດີອຸສ ຊຽວຊານ ສ.ສ. ເຢຍຣະມັນ ທີ່ປຶກສາກິຕິມະສັກ ປະຈຳໂຄງການ, ນາງ ດາລາ ກັນລະຍາ ຄະນະປະຈຳສູນກາງແນວລາວສ້າງຊາດ, ບັນດາຫົວໜ້າກົມ, ຮອງຫົວໜ້າກົມ, ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.



ໃນພິທີ ທ່ານ ບຸນເລີດ ທຳມະຈັກ ຜູ້ຮັກສາການແທນຫົວໜ້າໂຄງການ ໄດ້ຍົກໃຫ້ເຫັນ ການເຄື່ອນໄຫວ ແລະ ຜົນງານທີ່ພົ້ນເດັ່ນຫລາຍດ້ານ ເຊິ່ງຕະຫລອດ 1 ປີ ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ສຳຫລວດຢູ່ແຂວງຫລວງພະບາງ, ໄຊຍະບູລີ ແລະກຳແພງນະຄອນວຽງຈັນ ຄຽງຄູ່ກັບນັ້ນ ໜ່ວຍຖ່າຍໄມໂຄຼຟິມ ໄດ້ລົງເຄື່ອນໄຫວ 5 ຕົວເມືອງ ໃນກຳແພງນະຄອນວຽງຈັນ ຖ່າຍທຳໄດ້ 59 ມ້ວນ, 993 ເລື່ອງ 4.338 ຜູກ. ຊຸກຍູ້ການສຶກສາສົງ ແຂວງຫລວງພະບາງ ອຸດົມໄຊ ແລະ ວິທະຍາໄລສົງອົງຕື້ ຈຳນວນ 9.210.000 ກີບ, ຈັດພິມປຶ້ມວັນນະຄະດີບູຮານ 5 ຫົວເລື່ອງ: ສ້ອຍສາຍຄຳ. ສຸພາສິດບູຮານ, ຜະຫຍາຍ່ອຍ. ຄາຣະວາດປະຕິບັດ, ນິຍາຍລັດສີສົງ ຈຳນວນພິມທັງໝົດ 10.000 ຫົວ ແລະ ໄດ້ແຈກຢາຍລົງແຕ່ລະຫ້ອງກຸ່ມ ເຂດແຂວງຕ່າງໆ. ຈັດກອງປະຊຸມສຳມະນາວິຊາການກ່ຽວກັບວິທີວິທະຍາ ໃນການປົກປັກຮັກສາໜັງສືໃບລານ ແລະ ກອງປະຊຸມສຳມະນາ ໃນການອະນຸລັກພາສາລາວບູຮານ ເພື່ອໃຫ້ນັກຂຽນຮຸ່ນໃໝ່ ໄດ້ເຫັນຄວາມສຳຄັນ ແລະນຳໃຊ້ພາສາລາວບູຮານເຂົ້າໃນບົດຂີດຂຽນຕ່າງໆ.

ຜົນໄດ້ ຈາກການເຄື່ອນໄຫວຕະຫລອດ 1 ປີນັ້ນ ໄດ້ເຮັດໃຫ້ຊາວບ້ານເຂົ້າໃຈຢ່າງເລິກເຊິ່ງຕໍ່ນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຟື້ນຟູວັດທະນະທຳຂອງຊາດ ໂດຍຊາວບ້ານ, ພະສົງ ແລະ ອຳນາດການປົກຄອງທຸກຂັ້ນ ໃຫ້ການຮ່ວມມື ແລະ ປະກອບສ່ວນໃນການອະນຸລັກຮັກສາໜັງສືໃບລານ.

ຜົນໄດ້ຮັບ ທາງວິຊາການ ເຫັນວ່າການເກັບມ້ຽນ ແລະ ຈັດໝວດໝູ່ເປັນລະບົບ ຈະສະດວກໃນການສຶກສາຄົ້ນຄວ້າ, ການອະນາໄມ ເຊັດເຫລົ້າເກົ້າສິບ ຍັງເປັນການຍືດອາຍຸຂອງໜັງສືໃບລານຕື່ມອີກຫລາຍຮ້ອຍປີ.

❀ ❀ ❀ ❀ ❀

## ນາງ ກິ່ງເດືອນ ເນດຕະວົງ ຫົວໜ້າໂຄງການ ປົກປັກຮັກສາໜັງສືໃບລານລາວຄົນໃໝ່



ເນື່ອງຈາກ ຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ ນາງ ດາລາ ກັນລະຍາ ໄດ້ຍົກຍ້າຍໄປຮັບຕໍາແໜ່ງ ເປັນຄະນະປະຈໍາສູນກາງແນວລາວສ້າງຊາດ ຕາມການແຕ່ງຕັ້ງ ແລະ ມອບໝາຍ ດັ່ງນັ້ນ ຕາມການຕົກລົງ ຈາກລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ ຈຶ່ງແຕ່ງຕັ້ງ ນາງກິ່ງເດືອນ ເນດຕະວົງ ຫົວໜ້າຫໍສະມຸດແຫ່ງຊາດ ເປັນຫົວໜ້າ ໂຄງການຜູ້ໃໝ່.

ພິທີ ມອບ-ຮັບ ໜ້າທີ່ ລະຫວ່າງ ຫົວໜ້າໂຄງການຜູ້ເກົ່າ ແລະ ຜູ້ໃໝ່ ໄດ້ຈັດຂຶ້ນໃນກາງເດືອນ ຕຸລາ ໂດຍມີ ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ. ທ່ານ ສາສະດາຈານ ດຣ. ຮາຣັນ ຮຸນດິອຸສ ຊ່ຽວຊານປະຈໍາໂຄງການ, ບັນດາຫົວໜ້າກົມ, ຮອງກົມ ແລະພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພິຍານ.

ນາງກິ່ງເດືອນ ເນດຕະວົງ ໄດ້ສະແດງຄວາມຮູ້ສຶກ ໃນໂອກາດທີ່ໄດ້ຮັບມອບໝາຍໜ້າທີ່ ດັ່ງນີ້ວ່າ: " ດີໃຈ ທີ່ທາງຂັ້ນເທິງໄດ້ມອບໝາຍໜ້າທີ່ອັນມີຄວາມສໍາຄັນນີ້ ໃຫ້ແກ່ຕົນຮັບຜິດຊອບ, ຕົນຈະພາຍາຍາມຈົນສຸດຄວາມສາມາດ ໃຫ້ສົມກັບທີ່ຂັ້ນເທິງໄວ້ວາງໃຈ ແລະ ເຖິງວ່າຕົນຈະມາຮັບຜິດຊອບໜ້າທີ່ໃໝ່ ແຕ່ນະໂຍບາຍ ແລະ ການເຄື່ອນໄຫວຂອງໂຄງການຍັງຄົງສືບຕໍ່ຕາມແຜນການທີ່ໄດ້ວາງໄວ້ ".

## ສ.ສ. ເຢຍຣະມັນ ມອບເຄື່ອງໄມໂຄຼຟີມ ສໍາຫລັບ ອ່ານ ແລະ ພິມ

ທ່ານ ໂຟນເດີແບັງ ອຸປະທູດຂອງສະຖານທູດ ສ.ສ. ເຢຍຣະມັນປະຈໍາລາວ ຕາງໜ້າໃຫ້ແກ່ ລັດຖະບານ ສ.ສ. ເຢຍຣະມັນ ໄດ້ມອບເຄື່ອງອ່ານແລະພິມໄມໂຄຼຟີມ ໃຫ້ແກ່ໂຄງການ ຈໍານວນ 1 ເຄື່ອງ ໃນກາງເດືອນ ຕຸລາ ໂດຍແມ່ນທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ ເປັນຜູ້ຮັບ.

ເຄື່ອງຈັກໄມໂຄຼຟີມ ຊະນິດນີ້ ແມ່ນເຄື່ອງທໍາອິດທີ່ມີຢູ່ໃນ ສ.ປ.ປ.ລາວ ຮວມມູນຄ່າ 23 ລ້ານສີ່ແສນກວ່າກີບ ເຊິ່ງຈະໄດ້ນໍາໃຊ້ເຂົ້າໃນວຽກງານການຄົ້ນຄວ້າໜັງສືໃບລານລາວ ໂດຍສະເພາະ ຈະນໍາໃຊ້ໃນການອ່ານ ແລະ ພິມເອກະສານໃບລານ ທີ່ໄດ້ຖ່າຍທໍາມາຈາກວັດແຫ່ງຕ່າງໆ ໃນທົ່ວປະເທດ.



# ໃຊສຳນວນພາສາລາວບູຮານ
## " ຄວາມບໍ່ແລ້ວ ແຮ້ວບໍ່ລັ້ນ "

*ອ່ອນສີ ປະຊາວົງ.*

ໃນສະໄຫມບູຮານ ເວລາມີຄົນລົ້ມເສຍທາຍຕາຍເສຍຈາກ ຫລັງຈາກມ້ຽນດູກຫລັງຝັງດູກຂ້າງແລ້ວ ຜູ້ເປັນເຊື້ອສາຍລາຍລ່ອງ ລູກເຕົ້າເຫລົ່າກໍ ພາກັນຫ້າງແຮ້ວໃສ່ກອງຟອນໄວ້. ກ້າວ່າແຮ້ວບໍ່ລັ່ນ ຫມາຍຄວາມວ່າ ຈະມີເລື່ອງມີຄວາມ ກັບຄົນທີ່ຍັງມີຊີວິດພາຍໃນຄອບຄົວ. ກ້າວ່າແຮ້ວທີ່ຫ້າງໄວ້ນັ້ນລັ່ນ ຫມາຍຄວາມວ່າ ບໍ່ມີເລື່ອງມີຄວາມ. ດັ່ງນັ້ນຄົນບູຮານຈຶ່ງມີຄວາມເວົ້າໄວ້ວ່າ :

"ຄວາມບໍ່ແລ້ວ ແຮ້ວບໍ່ລັ່ນ, ຄວາມແລ້ວແຮ້ວລັ່ນ "

ຜູ້ຂຽນ ຂໍຍົກເອົານິທານມາປະກອບໃສ່ສຳນວນຄວາມເວົ້າດັ່ງກ່າວ. ຍັງມີຄອບຄົວຫນຶ່ງ ອາໃສຢູ່ເຂດຊົນນະບົດ ຫມູ່ບ້ານແຫ່ງຫນຶ່ງ. ຢູ່ໃນຄອບຄົວນັ້ນ ຍັງມີພໍ່ ແລະລູກຊາຍສາມຄົນ ສ່ວນວ່າເມຍຂອງລາວນັ້ນໄດ້ຕາຍຈາກລາວໄປແລ້ວ ປະແຕ່ລູກຊາຍສາມຄົນໄວ້ ໃຫ້ລາວເປັນຜູ້ເບິ່ງລ່ຳຄ່ຳຄອຍ ຮັບພາລະເປັນທັງພໍ່ເປັນທັງແມ່ ໃຫ້ຄວາມອົບອຸ່ນແກ່ລູກເຕົ້າ.

ສ່ວນວ່າສາວແກ່ແມ່ຮ້າງ ບາງຫມ້າຍ ຢູ່ໃນບ້ານແຫ່ງນັ້ນກໍ່ມີຄວາມຮັກໄຄ່ພໍໃຈກັບລາວ ຍ້ອນເຫັນຄວາມດຸຫມັ່ນຂະຫຍັນພຽນ ໃນການເຮັດໄຮ່ໄຖນາ ຫາເງິນຄຳກຳແກ້ວ, ຊອກຫາຊິ້ນຕ່ອນໂຕປາ ເພື່ອລ້ຽງລູກມາ ພາລູກໃຫຍ່ນຳບ້ານນຳເມືອງເພິ່ນ ບໍ່ໃຫ້ລູກອຶດຢາກຫມາກແຄ້ນ.

ສຳລັບພໍ່ຫມ້າຍ ຊາຍໂຫນຜູ້ນີ້ ລາວກໍ່ຄິດຢາກສ້າງຄອບສ້າງຄົວ ແຕ່ລາວກໍ່ຄິດໃນໃຈວ່າ ຄັນຊິເອົາເມຍໃຫມ່ ກໍ່ຢ້ານເມຍມາຂົ່ມເຫັງເຕັງເຕັກບຽດສີຕີດ່າ ບໍ່ຮັກຫອມຖະນອມແພງລູກຂອງຕົນ. ໃນທີ່ສຸດ ລາວກໍ່ເລີຍຕັດສິນໃຈບໍ່ສ້າງຄອບຄົວເລີຍ ຢູ່ຕໍ່ມາໄດ້ຫລາຍຟ້າຫລ້າປີລາວກໍ່ເລີຍເຖົ້າແກ່ຊະລາກາບ ເຫມືອນດັ່ງໄມ້ໃກ້ຝັ່ງນັ່ງໃກ້ຫ້ວຍ.

ມີມື້ຫນຶ່ງ ລາວກໍ່ເກີດເຈັບເປັນຍ້ອນໂລກຊະລາເຂົ້າມາປະຈົນ ບັງບຽດ. ກ່ອນລາວຈະສິ້ນລົມຫາຍໃຈຈາກໂລກນີ້ໄປ ລາວຈຶ່ງເອີ້ນເອົາລູກທັງສາມເພື່ອມາສັ່ງ ລາວວ່າ :

ເອີ... ລູກເອີຍ! ພໍ່ນີ້ຈະບໍ່ຫມັ້ນຍືນຢູ່ນຳລູກນຳເຕົ້າຕໍ່ໄປອີກແລ້ວ ເກືອງວ່າພວກລູກພວກເຕົ້າ ຈະຊອກຫາຫວ້ານຢາຫາມັງມາປິ່ນປົວຄົວລັ້ນ ພໍ່ກໍ່ບໍ່ມີວັນຫາຍໄດ້ ຍ້ອນວ່າອາຍຸສັງຂານຂອງພໍ່ກືມາທໍ່ນີ້ ຂໍໃຫ້ລູກເຕົ້າມີຄວາມຮັກແພງສາມັກຄີຊ່ອຍເຫລືອເກື້ອກຸນຊຶ່ງກັນ ແລະ ກັນ. ສ່ວນມູນມັງສັງຂະຫຍານັ້ນ ພໍ່ໄດ້ແບ່ງສັນປັນສ່ວນໃຫ້ລູກແຕ່ລະຄົນ ເປັນທີ່ຮຽບຮ້ອຍແລ້ວ. ເຄື່ອງຂອງມູນມັງທີ່ພໍ່ປັນໃຫ້ລູກແຕ່ລະຄົນນັ້ນ ພໍ່ໄດ້ເອົາໃສ່ໄວ້ໃນຫມໍ້ສາມຫນ່ວຍນີ້ ແລະ ໄດ້ເອົາຜ້າຂາວ ມັດປາກຫມໍ້ໄວ້ ພໍ່ຂໍມອບໃຫ້ລູກແຕ່ລະຄົນ. ຫລັງຈາກນັ້ນ ພໍ່ກໍ່ເລີຍຫມົດບຸນໄປ.

ພວກລູກເຕົ້າທັງສາມ ກໍ່ພາກັນເຮັດທີບເຮັດໂລງໃສ່ພໍ່ ແລ້ວກໍ່ເອົາໄປເລີກຊາກສົ່ງສະການ ພາກັນມ້ຽນດູກຫລັງຝັງດູກຂ້າງໃຫ້ຜູ້ເປັນພໍ່ຢ່າງສົມຫນ້າງາມຕາ ແລ້ວກໍ່ພາກັນຫ້າງແຮ້ວໃສ່ກອງຟອນໄວ້ ກ້າວ່າແຮ້ວທີ່ຫ້າງໄວ້ໃນກອງຟອນນັ້ນລັ່ນ ຫມາຍຄວາມວ່າ ບໍ່ມີເລື່ອງຫຍັງ. ຕົກມາຕອນເຊົ້າມື້ໃຫມ່ ລູກທັງສາມກໍ່ພາກັນໄປຈອບເບິ່ງ ແຮ້ວທີ່ຫ້າງໄວ້ໃນກອງຟອນຂອງພໍ່ນັ້ນ ຍັງບໍ່ທັນລັ່ນເທື່ອ. ພວກລູກທັງສາມ ຈຶ່ງພາກັນກັບຄືນມາເຮືອນ ແລະ ພາກັນສົນທະນາພາທີ ກ່ຽວກັບມູນມັງທີ່ພໍ່ແບ່ງປັນໃສ່ໄຫໄວ້ນັ້ນ ບໍ່ມີໃຜເຂົ້າໃຈ ບໍ່ຮູ້ຊິພາກັນເຮັດແນວໃດ ພວກເຂົາຈຶ່ງພາກັນໄປຫານັກປາດຜູ້ສະຫລາດຮູ້ ມາອະທິບາຍ ໃຫ້ພວກເຂົາທັງສາມເຂົ້າໃຈໃນການແບ່ງປັນວັດຖຸສິ່ງຂອງ ໃຫ້ແຕ່ລະຄົນ. ພໍທ່ານນັກປາດມາຮອດເຮືອນຊາຍທັງສາມແລ້ວ ຈຶ່ງໂຈມເອົາຫມໍ້ແຕ່ລະຄົນມາຕັ້ງໄວ້ຕໍ່ຫນ້າທ່ານນັກປາດ. ນັກປາດຈຶ່ງບອກໃຫ້ໄຂເບິ່ງຫມໍ້ຂອງຜູ້ເປັນອ້າຍ ຈຶ່ງເຫັນແຕ່ກະດູກ. ສ່ວນຫມໍ້ຂອງນ້ອງຊາຍຜູ້ຫນຶ່ງ ເຫັນແຕ່ຂີ້ກ່ານໄຟ. ຫມໍ້ຂອງນ້ອງຜູ້ເປັນນ້ອງຊາຍຫລ້າ ເຕັມແຕ່ຂີ້ເຖົ່າ. ໃນເມື່ອທ່ານນັກປາດເຫັນແນວນັ້ນ ທ່ານຈຶ່ງມີຄຳເຫັນ ແລະ ອະທິບາຍສູ່ຊາຍທັງສາມວ່າ :

# " ປະໂລມໂລກ "

ຄັດຈາກຫນັງສືໃບລານ ຫໍພິພິທະພັນຫລວງພະບາງ ຂຽນໂດຍ ເຈົ້າຄຳປິ່ນ

ກອດໂດຍ : ມະຫາບຸນຍົກ ແສນສຸນທອນ

ເມື່ອຊິໄຂຣະທັດຕ້ານ    ດອມເສືອຫມາຊິຕື່ມ ຣິນຕີ
ຈັກແຄ້ນຄັ່ງຝູງຫມູ່ເຫມັ້ນ    ໄພກວ້າງຊິຟັ່ງເພືອນ
ແມ່ຫາກຕາມຫຽນໃຕ້    ໄຟລາມໃພຊິມອດ ດອມນັ້ນ
ເຈົ້າຫາກເປັນຜູ້ຮູ້    ສຸມຮື້ນອູດຍຸງ
ມັນແມບໄວ້ເຍືອງແສງ    ໃພບໍ່ສ່ອງ ອິດູເດ
ລົມຫາກອຸ້ມຫອບກຸ້ມ    ຄວັນເທົ້າທົ່ວເມືອງ
ເຈົ້າຊິຕົບຍຸງກຸ້ມ    ຫມາງເມີນກໍຍັງເຮືອດ
ຮື້ນກໍຄອງຢູ່ກ້າ    ຄອຍຢ້ຽມຜໍ່ລົມ
ມັນຫາກຫຽວທາງເວົ້ງ    ງົມງວາຍຫລົງປ່າ ກໍຕາມທ້ອນ
ຕີຫລີກເຊື່ອງເຜດໄວ້    ເຊີງລ້ແຂກຂຸນ
ເສືອໂຄ່ງ ຍົບຕາໃຫ້    ຫມາໄນຊິດັ້ນປ່າ ໄປແລ້ວ
ເຮືອນຮົກມາບໍ່ມ້ຽນ    ຫມາຊິເຕົ້າທົ່ວເຮືອນ
ຊາດທີ່ແນວເສືອຂ້ຽວ    ກໍຕາຊອນຢ້ຽມປ່ອງເລີງແລ້ວ
ເຈົ້າແມ່ກາຍບໍ່ຊ່າງເວັ້ນ    ໄປໃກ້ກໍຫາກຂິວ.

---

ສຳລັບຫມໍ້ທີ່ມີແຕ່ກະດູກນັ້ນ ຫມາຍຄວາມວ່າ ພໍ່ໄດ້ແບ່ງສັດສາວາສິ່ງ ເນື້ອເກຶກເອີກລາຍໃຫ້.

ສຳລັບຫມໍ້ ທີ່ມີຂີ້ກາບໄຟນັ້ນ ຫມາຍຄວາມວ່າ ພໍ່ໄດ້ແບ່ງປັນເງິນຄຳ ສັບສິນທີ່ຊອກມາຫາມ້ຽນໃຫ້.

ຫມໍ້ຫນ່ວຍສຸດທ້າຍ ທີ່ເຕັມແຕ່ຂີ້ເກົ່າຂອງນ້ອງຊາຍຫລ້ານັ້ນ ຫມາຍຄວາມວ່າ ພໍ່ໄດ້ແບ່ງປັນ ໄຮ່ນາສາໂທ ເປັນບ່ອນສ້າງຢູ່ທຳກິນໃຫ້.

ຫລັງຈາກການແບ່ງປັນວັດຖຸສິ່ງຂອງມູນມັງສັງຂະຫຍາ ໂດຍທ່ານນັກປາດຜູ້ສະຫລາດຮູ້ ແລະ ເຮັດໃຫ້ອ້າຍນ້ອງທັງສາມມີຄວາມພາກພູມໃຈ ພວກເຂົາຈຶ່ງພາກັນໄປຈອບເບິ່ງແຮ້ວທີ່ຫ້າງໄວ້ ໃນກອງຟອນນັ້ນ, ກໍ່ເຫັນແຮ້ວນັ້ນລັ່ນ. ອັນນີ້ເປັນປິສະນາບູຮານ ເພິ່ນສອນຄົນໂດຍທີ່ອີງເອົາຮີດຄອງປະເພນີໃດຫນຶ່ງເປັນເຄື່ອງຊັກຈູງຊີ້ນຳ. ຄຳບູຮານທ່ານເວົ້າໄວ້ເປັນປິສນາບັນຫານີ້ ບາງເທື່ອພວກເຮົາ ເຍົາວະຊົນຜູ້ເກີດໄດ້ໃຫຍ່ລຸນອາດບໍ່ເຂົ້າໃຈ ແລະ ຕີລາຄາຕ່ຳຕໍ່ປິດບາດ ຄຳສອນ ແລະ ສຸພາສິດບູຮານ ບາງຄົນບາງທ່ານ ເຫັນວ່າຫລ້າສະໄຫມ, ພົ້ນສະໄຫມໄປ ຄວາມຈິງກ້າເຮົາຮູ້ຄິດຮູ້ພິຈາລະນາ ນຳມາໃຊ້ໃຫ້ເກີດປະໂຫຍດໃນການສຶດສອນອົບຮົມ ແລະ ຫມູນໃຊ້ໃຫ້ກືກ ກັບສັງຄົມປັດຈຸບັນ ກໍຄົງໃຊ້ໄດ້ຢູ່. ຈຶ່ງຂໍຝາກຄຳຄິດເຫັນອັນນີ້ ສູ່ທ່ານຜູ້ຮູ້ຊ່ອຍພິຈາລະນາ.

❀ ❀ ❀ ❀

**ວຽກທີ່ບໍ່ຄວນຮີບຮ້ອນ ມີສີ່ປະການ :**

(ຄັດຈາກຫນັງສືໃບລານ ພິພິທະພັນແຂວງຫລວງພະບາງ)

ໂດຍ : ***ອ່ອນສີ ປະຊາວົງ***

1. ຫຽວທາງໄກຄັນວ່າຄ່ຳບ່ອນໃດ ໃຫ້ນອນທີ່ນັ້ນ
2. ບໍ່ຮູ້ໃຫ້ຫມັ່ນເຂົ້າສະແຫວງການ
3. ນອນທີ່ບໍ່ສຳລາບ ທີ່ເພພັງ ຢ່ານັກຫລັບ, ຄອນເກງຂາມ
4. ຂອງມຸງຄຸນຢ່າໃຫ້ພາກອ້າງ

# ວັດຊຽງຍືນ ພື້ນຖານວັດທະນະທຳ ຂອງບ້ານຊຽງແມນ.



ທ່ານມະຫາບຸນເລີດ ແສນສຸນທອນ ແລະ ທ່ານ ອອນຈັນສະຫມອນ ປະກອບສຳເນີນ ໃນພິທີສະຫລຸບການສຳຫລວດ ທີ່ບ້ານຊຽງແມນ

ເລີ່ມຕົ້ນປີ 1997 ໂຄງການໄດ້ເລືອກເອົາວັດຊຽງຍືນ ບ້ານຊຽງແມນ ເມືອງຈອມເພັດ ເຊິ່ງຕັ້ງຢູ່ຟາກນ້ຳຂອງກ້ຳຂວາ ກົງກັນຂ້າມກັບຕົວເມືອງຫລວງພະບາງນັ້ນ ເປັນຈຸດສຳຫລວດຕໍ່ໄປ.

ການສຳຫລວດ ໃຊ້ເວລາ 18 ວັນ (ແຕ່ວັນທີ 7-24 ມັງກອນ) ກໍ່ສຳເລັດ ໃນວັນທີ 10 ກຸມພາ ຈຶ່ງໄດ້ຈັດພິທີສະຫລຸບຢ່າງເປັນທາງການ. ເຂົ້າຮ່ວມໃນພິທີມີ ນາງກົງເດືອນ ເນດຕະວົງ ຫົວຫນ້າໂຄງການປົກປັກຮັກສາຫນັງສືໃບລານ, ນາງດາລາ ກັນລະຍາ ທີ່ປຶກສາໂຄງການ, ພະອາຈານອອນແກ້ວ ຄະນະສຶກສາສົງແຂວງ, ບັນດາວິຊາການຂອງໂຄງການ, ອຳນາດການປົກຄອງບ້ານຊຽງແມນ, ພະສົງສາມະເນນ ແລະ ຊາວບ້ານຊຽງແມນ ເຂົ້າຮ່ວມ 200 ກວ່າຄົນ. **ທ່ານອອນຈັນສະຫມອນ** ວິຊາການປະຈຳໂຄງການໄດ້ແຈ້ງໃຫ້ຮູ້ວ່າຜ່ານການສຳຫລວດໃນຄັ້ງນີ້ ເຫັນວ່າ ວັດຊຽງຍືນ ມີຫນັງສືໃບລານ 2112 ຜູກ ຮວມມີ 191 ມັດ ມີເອກະສານທີ່ສຳຄັນ 29 ເລື່ອງ ທີ່ຈະໄດ້ຖ່າຍທຳໄມໂຄຟີມ ແຕ່ໃນນີ້ມີເອກະສານສຳຄັນທີ່ຫາຍາກ ຄືບໍ່ຄ່ອຍເຫັນຈາກບ່ອນອື່ນ ມີ 4 ເລື່ອງຄື : ນາງວິສາຂາຈຳສີນ (ບໍ່ເຄີຍພົບມາກ່ອນ), ໂລກະບັນຍັດ, ສັດຕກະນິບາດ, ມະໄລຍະສູດ ແລະ ໄຕຼໂລກະວິນິສສະຍະກະຖາ. **ທ່ານ ບຸນເລີດ ທຳມະຈັກ** ຮອງຫົວຫນ້າໂຄງການໄດ້ມີຄຳເຫັນ ຕໍ່ກັບສະພາບຫນັງສືໃບລານ ທີ່ວັດຊຽງຍືນວ່າ ເພິ່ນມີການປົກປັກຮັກສາ, ທ້ອນໂຮມໄວ້ດີພໍສົມຄວນ ເອກະສານທີ່ມີຢູ່ນີ້ ສ່ວນຫລາຍແມ່ນກົກນຳມາຈາກວັດໃກ້ຄຽງ ເຊັ່ນ: "ວັດທາດສົ້ວ, ວັດລ່ອງຄູນ, ວັດແສນ ແລະ ວັດໃຫມ່. ວັດຊຽງຍືນ ເປັນອີກວັດຫນຶ່ງທີ່ມີຫນັງສືສຳຄັນຫລາຍເລື່ອງ ສ່ວນຫລາຍຈະພົບຢູ່ໃນຫມວດພະວິໄນ ແລະ ພະສູດ ເຊິ່ງບາງຜູກມີອາຍຸເຖິງ 400 ກວ່າປີ." ພິເສດ ພະສົງສາມະເນນ ພວມອຸ້ນຂ້ຽວທຣຣມອ່ານ ແລະ ເທດ ເນື່ອງຈາກມີຜູ້ຊົງຄຸນວຸດທິຜູ້ທີ່ເຄີຍບວດເຄີຍຮຽນໄດ້ມາສິດສອນໃຫ້ ນັ້ນກໍ່ຄື **ລຸງຈານເຂັມມັງ** ແນວໂຮມບ້ານຊຽງແມນ ເພິ່ນຈະໃຊ້ເວລາຫວ່າງສິດສອນໃຫ້ແກ່ຈົວ, ເນນ ທັງໃນວັດຊຽງຍືນ ແລະ ວັດລ່ອງຄູນ ນັບວ່າເປັນບຸກຄົນທີ່ຫນ້າຍົກຍ້ອງອີກລີ ນີ້ແຫລະຄືການອະນຸລັກຮັກສາ ວັດທະນະທຳໃບລານອີກວິທີຫນຶ່ງ ບໍ່ໃຫ້ສູນເສຍທັງຍັງເຮັດໃຫ້ພະສົງ ຜູ້ເປັນເຈົ້າການໃນການນຳໃຊ້ໃບລານ ໄດ້ມີຄວາມຮູ້ຄວາມສາມາດ ໃນການເທດການສູດເພື່ອເຜີຍແຜ່ສິລະທຳ ໃຫ້ອອກດົບຍາດໂຍມຕໍ່ໄປ.



ທ່ານ ນ. ດາລາ ກັນລະຍາ ທີ່ປຶກສາປະຈຳໂຄງການ ຕິດຕາມການສຳຫລວດ ທີ່ບ້ານຊຽງແມນ

# ສັກກະຣາດ ຫລືສັງກາດ

✍ ສຳລິດ ບົວສີສະຫວັດ

ໃນເວລາ ກຳນົດວັນເດືອນປີ ຫລື ເວລາທີ່ຜ່ານມາ ໃຫ້ຮູ້ວ່າຊ້າຫລືໄວ ແລະ ດົນນານປານໃດ ຕາມປາກົດຢູ່ໃນເອກະສານບູຮານ ອາດຈະເປັນຕຳນານ ຫລື ປະຫວັດສາດ ເພິ່ນມັກຈະບອກສັກກະຣາດໄວ້ວ່າ ສັກກະຣາດໄດ້ເທົ່ານັ້ນເທົ່ານີ້ປີ ທີ່ເຫດການ ຫລື ເລື້ອງທີ່ກ່າວນັ້ນໄດ້ເກີດຂຶ້ນ.

ບັນຫານີ້ ມັກຈະມີການສັບສົນຫລາຍສົມຄວນ ເພາະວ່າສັກກະຣາດນັ້ນມີຫລາຍຢ່າງ ແລະ ໃນບາງທ້ອງຖິ່ນກໍມີຄວາມນິຍົມໃຊ້ແຕກຕ່າງກັນ ຕາມສະພາບການທີ່ກ່ຽວຂ້ອງ ກັບທ້ອງຖິ່ນ ຕົນ ແລະ ສິ່ງແວດລ້ອມຂອງໃຜມັນ.

ສະນັ້ນ ການຄົ້ນຄວ້າປະຫວັດສາດ, ການຄົ້ນຄວ້າວັດຖຸບູຮານ ແລະ ການສຳຫລວດກວດກາເອກະສານເກົ່າ ເຊັ່ນ: ສະໝຸດເຈ້ຍສາ ແລະຫນັງສືໃບລານເປັນຕົ້ນ ຈຳເປັນຕ້ອງຊອກຮູ້ໃຫ້ມີຄວາມເຂົ້າໃຈ ໃນເລື້ອງສັກກະຣາດ ຫລື ສັງກາດໃຫ້ລັກແນ່ ຈຶ່ງຈະມີຄວາມສະດວກ ແລະ ບໍ່ສັບສົນໃນເວລາຄົ້ນຄວ້າ ແລະ ຕີລາຄາເອກະສານ ຕາມອາຍຸການແທ້ຈິງຂອງມັນ.

ເນື່ອງຈາກວ່າໃນປະເທດເຮົາປັດຈຸບັນນີ້ ນິຍົມໃຊ້ຄຣິສຕະສັກກະຣາດ ດ້ວຍຖືວ່າເປັນສັກຣາດສາກົນ ແລະ ເຫດຜົນບາງຢ່າງທາງປະຫວັດສາດ. ຄົນສະໄຫມນີ້ ຜູ້ມີການສຶກສາພໍສົມຄວນ ຖ້າເຫັນ ຫລື ໄດ້ຍິນຄຣິສຕະສັກກຣາດ ຫລື ປີ ຄ.ສ. 1900 ເທົ່ານັ້ນ 1900 ເທົ່ານີ້ ຈະເຂົ້າໃຈທັນທີ ຫລື ມີມະໂນພາບເກີດຂຶ້ນໄດ້ຕາມຈິນຕະນາການຂອງຕົນທີ່ຊິນເຄີຍກັບ ຄຣິສຕະສັກກຣາດ ສາມາດກຳນົດໃນໃຈໄດ້ວ່າ ດົນນານປານໃດແລ້ວ.



ແຕ່ຖ້າໄດ້ເຫັນໃນປະຫວັດສາດບອກວ່າ ສົມເດັດພະເຈົ້າສຸຣິຍະວົງສາທັມມິກະຣາດ ຂຶ້ນສະເຫວີຍຣາຊສົມບັດໃນປີ ຈຸນລະສັກກຣາດ 995 ແລະ ສະເດັດສະຫວັນນະຄົດໃນປີ ຈຸນລະສັກກຣາດ 1057. ຜູ້ບໍ່ເຄີຍໃຊ້ອາດຈະບໍ່ເຂົ້າໃຈໄດ້ວ່າມັນດົນນານປານໃດ ຖ້າທຽບໃສ່ຄຣິສຕະສັກກຣາດ ອາດເຂົ້າໃຈດີ ເພາະເຄີຍໃຊ້.

ດັ່ງນັ້ນລວມທຽບເບິ່ງ ໂດຍຕັ້ງ 995 ລົງ ເອົາ 1181 ບວກເຂົ້າ ແລ້ວລົບດ້ວຍ 543 ດັ່ງນີ້: 995+1181-543 = 1633 ນັ້ນຫມາຍຄວາມວ່າ ປີຈຸນລະສັກກຣາດ 995 ແມ່ນປີຄຣິສຕະສັກກຣາດ 1633. ທີ່ເປັນດັ່ງນີ້ ເພາະເຮົາຊາບວ່າ ພຸດທະສັກກຣາດໄດ້ 1181 ປີແລ້ວ ຈຶ່ງຕັ້ງຈຸນລະສັກກຣາດ ແລະ ພຸດທະສັກກຣາດໄດ້ 543 ປີແລ້ວ ຈຶ່ງຕັ້ງຄຣິສຕະສັກກຣາດ.

ໃນປັດຈະບັນນີ້ ມີສັກກຣາດຢູ່ 4 ປະການ ທີ່ເຮົາອາດຈະພົບເຫັນໃນຕຳນານ ຫລື ພົງສາວະດານ ແລະ ປະຫວັດສາດຕາມບູຮານວັດຖຸ ແລະ ເອກະສານຕ່າງໆ ທັງເກົ່າ ແລະ ໃຫມ່ ຄື: ພຸດທະສັກກຣາດ, ຄຣິສຕະສັກກຣາດ, ມະຫາສັກກຣາດ ແລະ ຈຸນລະສັກກຣາດ, ເຊິ່ງມີຕົວເລກຫລາຍຫນ້ອຍຕ່າງກັນຕາມລຳດັບ ເຊັ່ນປີ

ປັດຈຸບັນນີ້: ພ.ສ. 2539. ຄ.ສ. 1996. ມ.ສ. 1918 ແລະ ຈ.ສ. 1358 ຖ້າເຮົາທົດລອງເອົາສັກກະຣາດຕ່າງໆ ລົບພຸດທະສັກກະຣາດ ຈະໄດ້ດັ່ງນີ້:

2539-1996 = 543, 2539 - 1918 = 621 ແລະ 2539 - 1358 = 1181 ນັ້ນຫມາຍຄວາມວ່າແນວໃດ ລອງພະຍາຍາມທຳຄວາມເຂົ້າໃຈເບິ່ງຜົນຕ່າງລະຫວ່າງຈຳນວນເລກເຫລົ່ານີ້ ມີປະຫວັດຄວາມເປັນມາແນວໃດ ອັນນັ້ນລະ ຄືປະຫວັດຂອງ ສັກກະຣາດ ຖ້າເຮົາຮູ້ແລ້ວ ບັນຫາກໍເປັນອັນຫມົດໄປໃນຕົວມັນເອງ ດັ່ງນີ້:

ພຸດທະສັກກະຣາດ ເພິ່ນຕັ້ງຂຶ້ນ ຫລັງຈາກພະພຸດທະເຈົ້າປະຣິນິບພານແລ້ວ ນັດນີ້ລ່ວງມາໄດ້ 2539 ປີ ແລ້ວ ສັກກະຣາດນີ້ກ່ຽວກັບອາຍຸພະພຸດທະສາສະຫນາ ເຫດໃດຈຶ່ງນັບຫລັງ ພະພຸດທະເຈົ້ານິບພານ ໃນຕຳນານບໍ່ມີບອກໄວ້ ແຕ່ຂ້າພະເຈົ້າຄິດເອົາວ່າ ອາດຈະເປັນເພາະເຫດການສຳຄັນທີ່ສຸດ ໃນພະພຸດທະສາສະຫນານັ້ນມີຢູ່ 3 ສະໄຫມ ຄືເວລາປະສູດ ຕັດສະຣູ້ ແລະ ປະຣິນິບພານ ເຊິ່ງກົງກັບວັນເພັງເດືອນຫົກທັງ 3 ສະໄຫມຍະການ ເພື່ອໃຫ້ລະລຶກເຖິງ 3 ສະໄຫມຍະການນັ້ນ ຈຶ່ງກຳນົດເຫດການສຸດທ້າຍເປັນການຕັ້ງສັກກະຣາດ.

ພຸດທະສັກກະຣາດນີ້ ເວລາໃຊ້ໃນສາກົນເພິ່ນໃສ່ B.E. ມີຄວາມຫມາຍວ່າ ພຸດທະສັກຣາດ(Buddhist Era) ມີຈຳນວນເລກຫລາຍກວ່າທຸກສັກກະຣາດ ເວລາປຽບທຽບຈຶ່ງຖືເອົາສັກກະຣາດນີ້ເປັນຫລັກ. ຖ້າໄດ້ຕົວເລກພຸດທະສັກກະຣາດແລ້ວ ກໍສາມາດໃຊ້ຜົນຕ່າງລະຫວ່າງຕົວເລກສັກກະຣາດນັ້ນໆລົບ ກໍຈະໄດ້ຕົວເລກສັກກະຣາດນັ້ນໆ ໂດຍຖືກຕ້ອງ. ໃນທຳນອງດຽວກັນ ຖ້າໄດ້ຕົວເລກສັກກະຣາດນັ້ນໆ ແລ້ວກໍໃຊ້ຜົນຕ່າງຂອງສັກກະຣາດນັ້ນໆ ບວກເຂົ້າໄປ ກໍຈະໄດ້ຕົວເລກພຸດທະສັກກະຣາດທັນທີ ຕົວຢ່າງ: ເອກະສານບອກວ່າ ຄ.ສ. 1996 ເອົາ 543 ບວກເຂົ້າກໍຈະເປັນ ພຸດທະສັກກະຣາດ 1996 + 543 = 2539. ມ.ສ. 1918 ເອົາ 621 ບວກເຂົ້າກໍເປັນພຸດທະສັກກະຣາດ 1918 + 621 = 2539. ຈ.ສ. 1358 ເອົາ 1181 ບວກເຂົ້າກໍເປັນພຸດທະສັກກະຣາດ 1358 + 1181 = 2539 ຕົວຢ່າງນີ້ ເອົາປີປັດຈຸບັນພິສູດ. ເຮົາຈະເອົາປີໃນອະດີດ ຫລື ໃນອະນາຄົດພິສູດ ກໍຈະໄດ້ດັ່ງດຽວກັນ.

ຄຣິສຕະສັກກະຣາດຕັ້ງຂຶ້ນ ເມື່ອພຸດທະສັກກະຣາດລ່ວງໄປແລ້ວໄດ້ 543 ປີ ນັບເອົາຕັ້ງແຕ່ວັນພະເຢຊູ ຄຣິດເກີດ, ປັດຈຸບັນນີ້ໄດ້ 1996 ປີແລ້ວ ສັກກະຣາດນີ້ຖືກັນວ່າເປັນສາກົນ ເພາະນິຍົມໃຊ້ທົ່ວໂລກ ເຫດຜົນກໍຄືວ່າ ປະເທດທີ່ນັບຖືສາສະຫນາຄຣິດ ສ່ວນຫລາຍແມ່ນຢູໂຣບ ແລະ ອະເມຣິກາ ເຊິ່ງມີອຳນາດທາງການເມືອງ ແລະ ເສດຖະກິດ ໄດ້ນຳມາໃຊ້ ບັນດາປະເທດ ທີ່ຢູ່ໃນອຳນາດ ແລະ ເຂດອິດທິພົນຂອງຕົນ, ແມ່ນແຕ່ໃນປະເທດເຮົາ ກໍຈັດວ່າຢູ່ໃນເຫດຜົນທຳນອງດຽວກັນ ຄືຜົນສະທ້ອນຈາກລັດທິອານານິຄົມ.

ເມື່ອເປັນທີ່ນິຍົມ ແລະ ຄົນທົ່ວໄປກໍເຂົ້າໃຈ ກໍບໍ່ຈຳເປັນຕ້ອງປຽບກັບໄປກັບມາໃຫ້ເສຍເວລາ ແຕ່ເຮົາກໍຕ້ອງຫາຄວາມເຂົ້າໃຈໃຫ້ມັນລະອຽດ ເພື່ອຄວາມສະດວກໃນການໃຊ້ໃຫ້ຖືກຕ້ອງ. ສຳລັບສັກກະຣາດນີ້ ຖ້າຕ້ອງການກ່າວເຖິງ ຍຸກສະໄຫມທີ່ດົນນານກ່ອນພະເຢຊູເກີດ ເພິ່ນໃສ່ B.C. ຢູ່ຫລັງຕົວເລກ ຫມາຍຄວາມວ່າ ກ່ອນ ຄຣິສຕະສັກກະຣາດ ( Before Christ ) ຖ້າຫລັງ ພະເຢຊູເກີດ



ຂະບວນແຫ່ຟ້ອນ ໃນພິທີສະຫລຸບການສຳຫລວດ ບ້ານຊຽງແມນ



*ສາມະເນນ ວັດຊຽງມັ່ນ ແລະ ວັດລ່ອງຄູນ ບ້ານຊຽງແມນ ສະມາຊິກນັກຮຽນ ຂອງ ລູຈານເຕັນໂຍ*

ເພິ່ນໃສ່ A.D. ຫຍໍ້ມາຈາກພາສາລາແຕງ ຫລື ລາຕິນວ່າ Anno domini ເພິ່ນແປໄວ້ວ່າ In the year of our lord ໃນປີແຫ່ງພະຜູ້ເປັນເຈົ້າຂອງເຮົາ ແຕ່ຕາມປົກກະຕິ ຫລັງພະເຢຊູເກີດບໍ່ຄ່ອຍນິຍົມໃສ່ ເພາະເປັນທີ່ເຂົ້າໃຈກັນຢູ່ແລ້ວ ແຕ່ກ່ອນພະເຢຊູເກີດຈຳເປັນແທ້ ຕ້ອງໃສ່ B.C. ເພື່ອໃຫ້ຈະແຈ້ງ.

ມະຫາສັກກະຣາດຕັ້ງຂຶ້ນ ເມື່ອພຸດທະສັກກະຣາດລ່ວງແລ້ວ 621 ປີ ໃນຍຸກນັ້ນ ໃນອິນເດຍຕອນໃຕ້ມີກະສັດອົງໜຶ່ງ ຊື່ສັກກະ ມີເດຊານຸພາບຫລາຍ ສາມາດຊະນະອິນເດຍ ທັງໝົດໄດ້, ຫລັງຈາກ ພະເຈົ້າ ອະໂສກະມະຫາຣາດ ເຊິ່ງເປັນເອກອັກຄະຣະພຸດທະສາສະນູປະຖຳ ປະມານ 300 ປີ. ເພື່ອເປັນອະນຸສອນ ເກືອງໄຊຊະນະຂອງຕົນ ສັກກະຣາຊາ ຫລື ພະເຈົ້າສັກກະ ຈຶ່ງຕັ້ງສັກກະຣາດຂຶ້ນໃໝ່ ເພື່ອເປັນການສະຫລອງໄຊ ນັບຕັ້ງຕົ້ນໜຶ່ງ ແຕ່ວັນນັ້ນມາ ໃຫ້ຊື່ວ່າ ສັກກະຣາຊະ ແປວ່າ ພະເຈົ້າສັກກະ ຫລື ປີແຫ່ງພະເຈົ້າສັກກະ ຄັນຕໍ່ມາ ສັກກະຣາຊະ ກໍກປ່ຽນສັ້ນເຂົ້າເປັນສັກຣາດ. ມະຫາສັກກະຣາດນີ້ ມີໃຊ້ໃນວົງແຄບບໍ່ຄ່ອຍແຜ່ຫລາຍຫລາຍ. ເຖິງຢ່າງໃດກໍດີໃນປະເທດເຮົາຕາມເອກະສານເກົ່າບາງທີກໍ່ຍັງພົບເຫັນຢູ່ ດັ່ງນັ້ນ ເພື່ອບໍ່ໃຫ້ສັບສົນ ຈຶ່ງຄວນຫາຄວາມເຂົ້າໃຈໄວ້.

ຈຸນລະສັກກະຣາດ ເກີດຂຶ້ນເມື່ອພຸດທະສັກກະຣາດລ່ວງແລ້ວໄດ້ 1181ປີ ເກີດຂຶ້ນທີ່ ພຸກາມປະເທດ ຄື ປະເທດພະມ້າໃນອະດີດ, ປັດຈຸບັນນີ້ປ່ຽນເປັນມຽນມາ ໂດຍເຫດຜົນປະການໃດ ເບິ່ງໄດ້ໃນປະຫວັດສາດປະເທດຂອງເພິ່ນ.

ໃນຍຸກທີ່ກ່າວນີ້ ໃນດິນແດນພຸກາມປະເທດ ມີຣາຊຄຣູ ຫລືສົມເດັດພະສັງຄະຣາດອົງໜຶ່ງ ຊື່ວ່າ ປຸບພະໂສຣະຫັນ ມີອິດທິພົນ ມີຄົນນິຍົມນັບຖືມາກມາຍຫລວງຫລາຍ ໄດ້ປະຕິວັດສິກອອກມາຍຶດຣາຊສົມບັດ ເປັນຜົນສຳເລັດ ຕັ້ງຕົນເປັນເຈົ້າແຜ່ນດິນ. ເພື່ອເປັນອະນຸສອນເກືອງໄຊຊະນະ ແລະເປັນການສະຫລອງໄຊ ໃນການຍຶດຣາຊສົມບັດໄດ້ ຈຶ່ງຕັ້ງສັກກະຣາດໃໝ່ໃນປະເທດເຂດອິດທິພົນຂອງຕົນ ເມື່ອພຸດທະການລ່ວງແລ້ວໄດ້ 1181ປີ (ຕົວເລກນີ້ ໃນໂຫຣາສາດ ຮຽກວ່າ "ກະທັງປາຢາ") ສັກກະຣາດອັນນີ້ເກີດຂຶ້ນທີຫລັງ ສັກກະຣາດຂອງພະເຈົ້າສັກກະແຫ່ງອິນເດຍ ເພື່ອບໍ່ໃຫ້ສັບສົນກັນ ຈຶ່ງຮຽກວ່າ ຈຸນລະສັກກະຣາດ ສ່ວນສັກກະຣາດແຫ່ງພະເຈົ້າສັກກະ ຈຶ່ງຮຽກວ່າ ມະຫາສັກກະຣາດ ເພາະເກີດກ່ອນ ຫລື ໃຫຍ່ກວ່າ.

ເປັນອັນວ່າ ເຮົາໄດ້ສັກກະຣາດເນື່ອງຈາກສະພາບການທາງສາສະໜາສອງສັກກະຣາດຄື: ພຸດທະສັກກະຣາດ ກັບຄຣິສຕະສັກກະຣາດ ແລະໄດ້ສັກກະຣາດ ເນື່ອງຈາກສະພາບບ້ານເມືອງ ຫລືທາງການເມືອງ ສອງສັກກະຣາດ ຄື: ມະຫາສັກກະຣາດ ກັບຈຸນລະສັກກະຣາດ ລວມເປັນສີ່ສັກກະຣາດດ້ວຍກັນ.

ໃນບັນດາສັກກະຣາດເຫລົ່ານີ້ ປາກົດເຫັນມີໃຊ້ຢູ່ໃນປະເທດເຮົາຫລາຍໜ້ອຍຕາມລຳດັບດັ່ງນີ້:

1. ຄຣິສຕະສັກກະຣາດ ນິຍົມໃຊ້ຫລາຍໂດຍທົ່ວໄປ ທັງທາງລັດ ແລະ ເອກະຊົນ ເພາະເປັນສັກກະຣາດສາກົນດັ່ງກ່າວແລ້ວ ໃຊ້ທັງໃນການເມືອງ ການຄ້າ ເສດຖະກິດ ແລະ ວັດທະນະທຳ ໂດຍສະເພາະ ເລື່ອງທີ່ພົວພັນກັບພາຍນອກ ຫລື ຕ່າງປະເທດ.

2. ພຸດທະສັກກະຣາດ ນິຍົມໃຊ້ໃນທາງສາສະໜາ ໂດຍສະເພາະຢ່າງຍິ່ງໃນທາງພຸດທະສາສະໜາ ເຊັ່ນໃນພຸດທະປະຫວັດ ຕຳນານ

ປະຫວັດສະຖານທີ່ສັກສິດ ແລະ ສິລາເລກ ພະເຈດີ ແລະ ຕາມແທ່ນພະພຸດທະຮູບ ເປັນຕົ້ນ.

3. ຈຸນລະສັກກຣາດ ນິຍົມໃຊ້ທົ່ວໄປໃນສະໄໝບູຮານ ໂດຍສະເພາະໃນທາງໂຫຣາສາດ ການຄຳນວນດາຣາສາດ ປັກກະທິນ ຜູກດວງລຶກຍາມ ເປັນຕົ້ນ.

ໃນເອກະສານບູຮານ ໂດຍສະເພາະໃນໜັງສືໃບລານ ມັກຈະມີຈຸນລະສັກກຣາດຫລາຍທີ່ສຸດ ຮອງລົງມາ ແມ່ນພຸດທະສັກກຣາດ ໄດ້ເຫັນສ່ວນໜ້ອຍ ແມ່ນມະຫາສັກກຣາດ.

4. ມະຫາສັກກຣາດ ນິຍົມໃຊ້ໜ້ອຍ ພົບເຫັນເປັນບາງເທື່ອບາງທີໃນເອກະສານເກົ່າ ແລະ ມັກຈະມີອາຍຸຫລາຍຮ້ອຍປີ ຈຶ່ງບັນທຶກໄວ້.

ທັງ 4 ສັກກຣາດນີ້ ສຳລັບນັກຄົ້ນຄວ້າ ເຫັນວ່າຈະຕ້ອງຮູ້ ແລະ ເຂົ້າໃຈ ເພາະມັນພົວພັນກັບຍຸກສະໄໝໃນການຕີລາຄາເອກະສານ ແລະການປະມານສະພາບການໃນອະດີດ ໃນເວລາຄົ້ນຄວ້າວິໄຈ ບັນຫາໃດໜຶ່ງໃນທາງປະຫວັດ ແລະ ບູຮານະຄະດີ.

ເພື່ອໃຫ້ເກີດພາບຜິດ ຫລື ວາດມະໂນພາບໃນເວລາໃຊ້ຈິນຕະນາການຕໍ່ບັນຫາ ຫລືເຫດການອັນໃດອັນໜຶ່ງ ເຊິ່ງເກີດຂຶ້ນໃນອະດີດ ຖ້າເຮົາຮູ້ໄລຍະເວລາ ຫລື ຄວາມດົນນານແຫ່ງເຫດການ ມັນຈະກໍ່ໃຫ້ເຮົາເກີດມະໂນພາບໄດ້ງ່າຍ ໃນເມື່ອເຮົາປ່ຽນສັກກຣາດອັນໃດອັນໜຶ່ງມາເປັນ ສັກກຣາດເຊິ່ງເຮົາລຶ້ງເຄີຍເຊັ່ນ ໃນປັດຈຸບັນນີ້ເຮົາເຄີຍຊິນກັບຄຣິສຕະສັກກຣາດ ເຮົາອາດປ່ຽນສັກກຣາດອື່ນມາເປັນຄຣິຕສັກກຣາດ ໄດ້ໂດຍຫລັກການ ດັ່ງໄດ້ອະທິບາຍມາແຕ່ຕົ້ນດ້ວຍເຫດຜົນທີ່ມີຄວາມເປັນມາໃນທາງປະຫວັດສາດ.

ມາບັດນີ້ເຮົາໃຊ້ວິທີງ່າຍໆຄື: ຕ້ອງຈື່ຈຳເລກ 3 ຈຳນວນນີ້ໃຫ້ໄດ້ຄື: 543, 621 ແລະ 1181. ເທົ່ານີ້ກໍພໍແລ້ວ. ເລກ 3 ຕົວນີ້ມາຈາກໃສ ເຮົາໄດ້ອະທິບາຍແລ້ວ. ບັດນີ້ພຽງໃຫ້ຈຳງ່າຍໆວ່າ 543 ສຳລັບ ຄຣິສຕສັກກຣາດ, 621 ສຳລັບມະຫາສັກກຣາດ ແລະ 1181 ສຳລັບຈຸນລະສັກກຣາດ.

ຍົກຕົວຢ່າງປີປັດຈຸບັນນີ້ ເຮົາຮູ້ວ່າ ພຸດທະສັກກຣາດ 2539 ຖ້າຢາກຮູ້ສັກກຣາດອື່ນ ທຳໄດ້ດັ່ງນີ້:

ຄຣິສຕສັກກຣາດ=2539-543 = 1996
*ມະຫາສັກກຣາດ=2539-621 = 1918*
ຈຸນລະສັກຣາດ=2539-1181= 1358

ໂດຍກັບກັນ ຖ້າເຮົາຮູ້ສັກກຣາດອື່ນ ຢາກຮູ້ພຸດທະສັກກຣາດກໍໄດ້ດັ່ງນີ້:

- ຄຣິສຕສັກກຣາດ 1996+543 = ເປັນພຸດທະສັກກຣາດ 2539
- ມະຫາສັກກຣາດ 1918+621 = ເປັນພຸດທະສັກກຣາດ 2539
- ຈຸນລະສັກກຣາດ 1358+1181 = ເປັນພຸດທະສັກກຣາດ 2539

ເຮົາກໍເອົາຕົວເລກ ພຸດທະສັກກຣາດເປັນຫລັກ ເພາະພຸດທະສັກກຣາດ ມີຕົວເລກຈຳນວນຫລາຍກວ່າຄືດົນກວ່າທຸກສັກກຣາດ. ການຄິດໄລ່ເປັນການປ່ຽນສັກກຣາດໜຶ່ງ ເປັນສັກກຣາດອື່ນ ມີຄວາມສຳຄັນໃນການປຽບທຽບ ເພື່ອໃຫ້ເຂົ້າໃຈໄລຍະເວລາທີ່ອາດຈະພົບເຫັນໃນເວລາຄົ້ນຄວ້າ ນັບວ່າເປັນປະໂຫຍດຫລາຍ ສຳລັບນັກຄົ້ນຄວ້າປະຫວັດສາດ ແລະ ບູຮານຄະດີ. ອີກປະການໜຶ່ງ ບາງທີອາດມີຄວາມຫຍຸ້ງຍາກເກີດຂຶ້ນກໍໄດ້ ໃນເມື່ອທ່ານໃຊ້ວິທີຂຽນຫຍໍ້ ຕົວຢ່າງໃນຄຳພີພະທຳມະສາດຫລວງ ຕອນກ່ຽວກັບລະບຽບການແຕ່ງຮາຊສານ ໄປຕ່າງປະເທດ.



*ຫົວໜ້າໂຄງການ, ເຂົ້າຮ່ວມຂະບວນແຫ່ທຳ ໃນພິທີສະຫລອງບຸນການສຳຫລວດ ທີ່ບ້ານຊຽງແມນ*

ໃນເອກະສານບອກວ່າ "ສັກກຣາດ 22 ຕົວອາດຍາເຈົ້າອົງຫລວງ ປົງອາດຍາໃສ່ຫົວມະຫາເສນາໃຫ້ແປງກວາຍ".

ກ້າປະສົບພົບເຫັນເຊັ່ນນີ້ ຜູ້ຍັງບໍ່ທັນມີປະສົບການໃນເລື່ອງນີ້ ອາດເປັນການຍາກທີ່ຈະເຂົ້າໃຈວ່າ ເປັນສັກກຣາດອັນໃດແທ້ ແລະ ຄຳວ່າ ອາດຍາເຈົ້າອົງຫລວງນັ້ນແມ່ນໃຜ. ເລື່ອງນີ້ຕ້ອງອາໄສ ຄວາມຮູ້ທາງປະຫວັດສາດເຂົ້າຊ່ວຍດ້ວຍ. ໃນພົງສາວະດານລາວ ບໍ່ເຄີຍມີພະເຈົ້າແຜ່ນດິນພະອົງໃດ ທີ່ປະຊາຊົນຮຽກວ່າ "ອາດຍາເຈົ້າອົງຫລວງ" ນອກຈາກ ສົມເດັດພະເຈົ້າສຸຣິຍະວົງສາ ເພາະເອົາເຈົ້າເຄົາຣົບຮັກ ບໍ່ຢາກອອກພະນາມຂອງພະອົງໂດຍກົງ ທັງໃນພົງສາວະດານ ກໍບອກໄວ້ວ່າ ພະອົງຂຶ້ນສະເຫວີຍຣາຊສົມບັດ ໃນປີຈຸນລະສັກກຣາດ 995.

ດັ່ງນັ້ນ ກ່ອນອື່ນເຮົາກໍພໍອະນຸມານໄດ້ວ່າ ສັກກຣາດ 22 ນັ້ນແມ່ນຈຸນລະສັກກຣາດ ເພາະເພິ່ນຂຽນເອົາແຕ່ສອງຕົວທ້າຍຄື: 22 ນັ້ນ ຕ້ອງແມ່ນປີຈຸນລະສັກກຣາດ 1022 ແລະ ທ້າຍພົງສາວະດານ ກໍຮັບສົມອ້າງອີກວ່າ ພະອົງໄດ້ສະເຫວີຍຣາຊສົມບັດ ນານເຖິງ 57 ປີ ບວກໃສ່ກັບ = 995 + 57 = 1052 ຕົກໃນລະຫວ່າງຣັດຊະການຂອງພະອົງພໍດີ ເຊື່ອໄດ້ວ່າ ການຄຳນວນຂອງເຮົາຖືກຕ້ອງ.

ສ່ວນຂຽນຫຍໍ້ນັ້ນກໍບໍ່ເປັນຂອງແປກແຕ່ປະການໃດ ແມ່ນໃນປັດຈຸບັນນີ້ ເຮົາກໍຍັງໃຊ້ຢູ່ເຊັ່ນ ຂຽນເອົາແຕ່ເລກສອງຕົວທ້າຍ ຕົວຢ່າງ 15/12 1996 ຫລື 15-12-96 ເຮົາກໍເຂົ້າໃຈໄດ້ງ່າຍ ເພາະເປັນປັດຈຸບັນ.

ແຕ່ກ້າລ່ວງໄປເປັນຫລາຍ ສະຕະວັດ ກໍອາດຫຍຸ້ງຍາກ ດັ່ງທີ່ເຮົາປະສົບມານີ້ ເຖິງຢ່າງໃດກໍດີ ເຮົາກໍມີວິທີຄິດໂດຍເອົາປະຣິບົດ ຫລື ເນື້ອຄວາມໃກ້ຄຽງມາພິສູດຄິດໄລ່ ຂໍ້ສຳຄັນແມ່ນຄົ້ນຄວ້າໃຫ້ຮອບດ້ານ.

ຕາມທີ່ກ່າວມານີ້ ຫວັງວ່າຈະພໍແກ້ໄຂບັນຫາໄດ້ບໍ່ຫລາຍກໍໜ້ອຍ.

## ໂຄງການປົກປັກຮັກສາໜັງສືໃບລານລາວ

(ການຮ່ວມມື ລາວ-ເຢຍລະມັນ)

### ຄະນະກຳມະການ

**ທີ່ປຶກສາ**

| | | |
|---|---|---|
| 1. ພະອາຈານ ມະຫາວິຈິດ ສິງຫາລາດ | ປະທານ ພສລ. | ປະທານ ກິດຕິມະສັກ |
| 2. ທ່ານ ບົວຄຽນ ສີສັນໄຊ | ຫົວໜ້າຫ້ອງການກະຊວງ | ທີ່ປຶກສາດ້ານນະໂຍບາຍ |
| 3. ທ່ານ ຄຳຫຼັງ ສຸນດາລາ | ຫົວໜ້າກົມພິມຈຳໜ່າຍ ຫໍສະໝຸດ ແລະ ປ້າຍ | ທີ່ປຶກສາດ້ານນະໂຍບາຍ |
| 4. ທ່ານ ສຳລິດ ບົວສີສະຫວັດ | ນັກວິຊາການອາວຸໂສ | ທີ່ປຶກສາດ້ານວິຊາການ |
| 5. ທ່ານ ບຸນຍົກ ແສນສຸນທອນ | ນັກວິຊາການອາວຸໂສ | ທີ່ປຶກສາດ້ານວິຊາການ |

**ທີ່ປຶກສາກິດຕິມະສັກປະຈຳໂຄງການ**

| | |
|---|---|
| 1. ທ່ານ ສາສະດາຈານ ດຣ. ຮະຣັລ ຮຸນດິອຸສ | ປະຈຳວິຊາ ພາສາ ແລະ ວັດທະນະທຳ ໄທ ແລະ ລາວ ມະຫາວິທະຍາໄລ ພັສຊາວ (ເຢຍລະມັນ) |
| 2. ນາງ ດາລາ ກັນລະຍາ | ກຳມະການປະຈຳສູນກາງແນວລາວສ້າງຊາດ |

**ຄະນະຮັບຜິດຊອບໂຄງການ**

| | | |
|---|---|---|
| 1. ນາງ ກອງເດືອນ ເນດຕະວົງ | ຫົວໜ້າອຳນວຍການ ຫໍສະໝຸດແຫ່ງຊາດ | ຫົວໜ້າໂຄງການ |
| 2. ທ່ານ ບຸນເລີດ ທຳມະຈັກ | ຮອງ ຫົວໜ້າອຳນວຍການ ຫໍສະໝຸດແຫ່ງຊາດ | ຄະນະໂຄງການ |
| 3. ທ່ານ ຄຳແສງດາວ ປະທຸມມະວົງ | ຫົວໜ້າພະແນກແຜນການກະຊວງ | ຄະນະໂຄງການ |

# " ການສອນເນນ "

ຄັດຈາກໜັງສືໃບລານ ຫໍພິພິທະພັນຫລວງພະບາງ

ໂດຍ : ***ທອງໝັກ ປັນຍາລັກສູນ***

| | |
|---|---|
| ນະມັສສະການໄຫວ້ | ແກ້ວແກ່ນໃຫ້ພູມມີນ |
| ພະສຸລິນຢູ່ຫົວເກດເກົ້າ | ເວົ້າໄປໜ້າມັນກວ້າງກວ່າຫລັງ |
| ອະນິຈັງເຫັນມາຕາມບ້ານ | ເຈົ້າຢ່າລ້ານປົວຮີດຄອງທຳ |
| ໃຫ້ຈຳນຳເມດຕາ | ພາວະນາຢ່າຂາດ |
| ໃຫ້ປັດກວາດຢ່າຂາດວັນສິນ | ກິນຂອງທານຈັ່ງທັນເພິ່ນບອກ |
| ພະສອນບອກຢ່າເກີດໂມໂຫ | ໂຕສອນໂຕຟັງເອົາຈຶ່ງໄດ້ |
| ບາບຢູ່ໃກ້ | ບຸນນັ້ນຢູ່ໄກ |
| ຜິດວິໄສ | ຢ່າທຳໄປໜ້າ |
| ດາບດວງກ້າມັນກຶກຫີນຊາ | ຝູງມັສສາຫາຊີມນ້ຳໃໝ່ |
| ລາງນົກໄສ່ມັນຮ້ອງເບື້ອງຂວາ | ລາງນົກກົ້ວ ມັນຮ້ອງບອກຊີ້ |
| ໃຫ້ເຈົ້າຈື່ ຕາມຮີດບູຮານ | ຟັງສຽງສານຈື່ຈຳໃສ່ເກົ້າ |
| ທຸກຄ່ຳເຊົ້າໄຫວ້ພໍ່ປີຕາ | ຄຸນມາດານົບທາຢ່າຂາດ |
| ຢ່າປະໝາດ | ຍັງແກ້ວທັງສາມ |
| ເອົ້າອາຣາມ | ຢ່າຫັດດອກໄມ້ |
| ບຸນບໍ່ໄດ້ | ອົບບາບໃສ່ໂຕ |
| ກຸກກຸໂຕ | ມັນຮ້ອງມີເມື່ອ ( ນີເບື່ອ ) |
| ໃຜບໍ່ເຊື່ອ | ຄຳນີ້ບໍ່ດີ |
| ອາລະຊີຝູງຄົນສາໂຫດ | ພະບໍ່ໂຜດມັນໄດ້ຈັກອັງ |
| ພະເມດໄຕຈະລົງພາຍໜ້າ | ດົນກ້ຽງຮາບສະເໝີໜ້າກອງໄຊ |
| ຝູງຍິງຊາຍພາວາຄົນບາບ | ມີມາກລົ້ນກວ່າຫາດຊາຍກອງ |
| ພະຜີປອງໂຜດເອົາຍັງໄດ້ | ໂຜດບໍ່ໄດ້ແຕ່ບາບ 5 ປະການ |

| | |
|---|---|
| - ຝູງສາມານຂ້າພໍ່ຕີແມ່ | ກໍ່ໂຜດບໍ່ໄດ້ |
| - ຝູງແປ່ມ້າງຮູບພະເຈດີ | ກໍ່ໂຜດບໍ່ໄດ້ |
| - ຟັນໂພສີລອກໜັງພະເຈົ້າ | ກໍ່ໂຜດບໍ່ໄດ້ |
| - ມັນແປ່ມ້າງ ປອງຂ້າພະສົງ | ກໍ່ໂຜດບໍ່ໄດ້ |
| - ມັນໂຄບໄພ້ຂ້າເຈົ້າເອົາຂອງ | ກໍ່ໂຜດບໍ່ໄດ້ |
| ປະການສອງທຳຄອງສາໂຫດ | ພະບໍ່ໂຜດ ມັນໄດ້ດີຫລີ |

- ມັນອ້າຕີພະສັງຄະເຈົ້າ
- ມັນກິນເຫລົ້າດ່າເຈົ້າສຳມະເນນ

ຝູງຫຍາບຊ້າ
ບໍ່ພິຈາລະຍັງ
ມັນກົ້ວໂກດ
ໃຈມືດມົນ
ມັນຈິ່ງໄດ້ຕົກອະເວຈີ
ທຸກໂສກໄຫມ້
ຝູງໂລກີ
ບາບກົ້ວໂກດ
ກຸມເອົາເຫລັກ
ຝູງຫມູ່ແຮ້ງ
ແຮ້ງສີບເຫລັກ
ແຮ້ງສີບທອງ
ເອົາຟັ່ງຟ້າວ
ດິ້ນໄປມາ
ຊິ້ນເປື່ອຍເປ້
ຕາຍບໍ່ເປັນ
ຕາຍບໍ່ໄດ້

ເຈົ້າຜູ້ທຸກ
ເຈົ້າຜູ້ມີ
ໃຫ້ຢາດນ້ຳ
ເປັນຄວາມດີ
ບາບຢູ່ໃກ້
ອາຊະໄນ
ອັນນີ້ແມ່ນ

ກໍ່ໂຜດບໍ່ໄດ້
ກໍ່ໂຜດບໍ່ໄດ້

ໃຈໂຫດສາມານ
ຄຸນ ແລະ ໂທດ
ຫາໂທດໃສ່ຕົນ
ເອົາຕົນຕົກໃຕ້
ຫົວໃຈມີເປື່ອຍແປຍັງດູກ
ວ່າໄດ້ແສນປີ
ບໍ່ໂຍມຍັງໂທດ
ບໍ່ເຊື່ອຄຳເອົາ
ລຳໃຫຍ່ແທງປາກ
ກາມາກທລວງຫລາຍ
ຕົວເທົ່າລຳຕານ
ຕົວເທົ່າລຳຜ້າວ
ເຈາະໄສ້ກິນຕາ
ອາບເອົາຍັງລົ້ນ
ຍັງດູກ ແລະ ເອັນ
ຍັງເອັນຕິດໄວ້
ທຸກໂສກແສນປີ

ຫາບກ້ອນເງິນດີ
ຫາບກ້ອນເງິນບາດ
ຮອດແມ່ທໍລະນີ
ພະສອນສັ່ງໄວ້
ບຸນນັ້ນຢູ່ໄກ
ກໍ່ຍັງຮູ້ແຫນ່
ກອນກາບສອນຈົວ.

*ອ່ານຕໍ່ສະບັບຫນ້າ*


**ເຈົ້າຂອງ**

ໂຄງການປົກປັກຮັກສາຫນັງສືໃບລານລາວ
( ການຮ່ວມມື ລາວ-ເຢຍຣະມັນ )
ສຳນັກງານ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຕູ້ ປ.ນ. 6244 ໂທລະສັບ 21 3029

**ຄະນະຈັດທຳ**

ທີ່ປຶກສາ : ດາລາ ກັນລະຍາ
ຫົວຫນ້າບັນນາທິການ : ກົງເດືອນ ນດຕະວົງ
ຮອງຫົວຫນ້າບັນນາທິການ : ບຸນເລີດ ທຳມະຈັກ
ຜູ້ຊ່ວຍບັນນາທິການ : ຈັນສະມຸດ ທີລະກຸນ
ຈັດຫນ້າຄອມພິວເຕີ : ຄຳມັກ ວົງສັກດາ
ຖ່າຍພາບ : ຈະເລີນໄຊ ພົມມະວົງສາ
ດາລາວັນ ລາດຊະວົງ